ກຸ່ມອຸດສາຫະກຳ
ຢາງພາລາຫວຽດ-ນາມ.

ສາທາລະນະລັດສັງຄົມນິຍົມຫວຽດ-ນາມ.
ເອກະລາດ - ເສລີພາບ - ຄວາມສົມບູນພູນສຸກ.

*ເລກທີ: 314/QĐ-HĐTVCSVN.*

*ນະຄອນ ໂຮ່ຈີມິງ, ວັນທີ: 16/7/2014.*

# ມະຕິຕົກລົງ

## ປະກາດໃຊ້ກົດຫຼັກຮັບຮອງ, ພິຈາລະນາໃນການສ່ອງແສງ, ຄຳສະເໜີ ແລະ ສະໜອງຕອບຂ່າວຄາວໃຫ້ກັບ ບັນດາສ່ວນບຸກຄົນ, ການຈັດຕັ້ງທີ່ມີບັນຫາກ່ຽວພັນເຖິງໂຄງການຂະຫຍາຍພັດທະນາຢາງພາລາຂອງ VRG ຢູ່ ທີ່ປະເທດກຳປູເຈຍ ແລະ ປະເທດ ສປປ ລາວ.

## ສະພາສາມະຊິກກຸ່ມອຸດສາຫະກຳຢາງພາລາຫວຽດ-ນາມ

ອີງໃສ່ມະຕິຕົກລົງສະບັບເລກທີ: 249/2006/QĐ-TTg ລົງວັນທີ: 30/10/2006 ຂອງນາຍົກລັດຖະມົນຕຣີ ກ່ຽວກັບການສ້າງຕັ້ງບໍລິສັດແມ່ - ກຸ່ມອຸດສາຫະກຳຢາງພາລາຫວຽດ-ນາມ.

ອີງໃສ່ດຳລັດສະບັບເລກທີ: 28/2014/NĐ - CP ລົງວັນທີ10/4/2014 ຂອງລັດຖະບານກ່ຽວກັບຂໍ້ລະບຽບໃນ ການຈັດຕັ້ງ ແລະ ເຄື່ອນໄຫວຂອງກຸ່ມອຸດສາຫະກຳຢາງພາລາຫວຽດ-ນາມ.

ຕາມການສະເໜີຂອງອຳນວຍການໃຫຍ່ກຸ່ມອຸດສາຫະກຳຢາງພາລາຫວຽດ-ນາມ ທີ່ລົງນາມໃນໃບສະເໜີສະບັບ ເລກທີ: 2039/TTr-CSVN ລົງວັນທີ: 11/7/2014.

## ຕົກລົງ

**ມາດຕາ1:** ປະກາດໃຊ້ຄັດຕິດກັບມະຕິສະບັບນີ້ " ກົດຫຼັກຮັບຮອງໃນການພິຈາລະນາການສ່ອງແສງ, ຄຳສະເໜີ ແລະ ສະໜອງຕອບຂ່າວສານໃຫ້ກັບບັນດາສ່ວນບຸກຄົນ, ການຈັດຕັ້ງທີ່ມີບັນຫາກ່ຽວພັນເຖິງ ໂຄງການຂະຫຍາຍ ພັດທະນາຢາງພາລາຂອງVRG ຢູ່ປະເທດກຳປູເຈຍ ແລະ ສປປ ລາວ"

**ມາດຕາ2:** ມະຕິຕົກລົງສະບັບນີ້ມີຜົນສັກສິດດຳເນີນການປະຕິບັດນັບແຕ່ມື້ມີລາຍເຊັນ.

**ມາດຕາ3:** ສະພາສະມາຊິກ, ຄະນະອຳນວຍການໃຫຍ່, ຫົວໜ້າຫ້ອງວ່າການກຸ່ມອຸດສາຫະກຳ, ຄະນະຊີ້ນຳ ຂະຫຍາຍພັດທະນາຢາງພາລາຢູ່ກຳປູເຈຍ, ຄະນະຊີ້ນຳຂະຫຍາຍພັດທະນາຢາງພາລາຢູ່ ສປປ ລາວ, ບັນດານັກ ລົງທືນໃນໂຄງການ, ສຳນັກງານຜູ້ຕາງໜ້າຂອງVRG ຢູ່ກຳປູເຈຍ, ຢູ່ລາວ ແລະ ບັນດາກົມກອງທີ່ມີການກ່ຽວ ພັນຂື້ນກັບກຸ່ມອຸດສາຫະກຳຢາງພາລາຫວຽດ-ນາມ ຕ້ອງມີໜ້າທີ່ ແລະ ຄວາມຮັບຜິດຊອບດຳເນີນການປະຕິບັດ ຕາມມະຕິຕົກລົງສະບັບນີ້.

ຕໜ. ສະພາສະມາຊິກ
ປະທານ,ທີ່ໄດ້ເຊັນ
***ຫວໍສີລຶກ***

*ບ່ອນຮັບ:*

- *ຕາມ: ມາດຕາ3.*
- *ສຳເນົາ: ຫ້ອງສະໝຸດ.*

ກຸ່ມອຸດສາຫະກຳ
ຢາງພາລາຫວຽດ-ນາມ.

ສາທາລະນະລັດສັງຄົມນິຍົມຫວຽດ-ນາມ.
ເອກະລາດ - ເສລີພາບ - ຄວາມສົມບູນພູນສຸກ.

# ກົດຫລັກ

**ໃນການຮັບຮອງ, ການພິຈາລະນາການສອ່ງແສງ, ຄຳສະເໜີ ແລະ ສະໜອງຕອບຂ່າວຄາວໃຫ້ກັບບັນດາຫົວໜ່ວຍເອກະຊົນ, ການຈັດຕັ້ງທີ່ມີບັນຫາກ່ຽວພັນເຖິງໂຄງການຂະຫຍາຍພັດທະນາຢາງພາລາຂອງVRGຢູ່ປະເທດກຳປູເຈຍ ແລະ ສປປ ລາວ.**

*( ປະກາດໃຊ້ຕິດຄັດກັບມະຕິກົກລົງສະບັບເລກທີ: 314/QĐ-HĐTVCSVN ລົງວັນທີ 16/7/2014 ຂອງກຸ່ມອຸດສາຫະກຳຢາງພາລາຫວຽດ-ນາມ )*

## I. ບັນດາຂໍ້ກຳນົດລວມ:

**ມາດຕາ1: ສິດຂອບເຂດ ແລະ ເປົ້າໝາຍທີ່ນຳໃຊ້.**

1-ກົດຫລັກສະບັບນີ້ໄດ້ກຳນົດໃນການຮັບຮອງ, ການພິຈາລະນາຕັດສິນໃນການສ່ອງແສງ, ຄຳສະເໜີຂອງສວ່ນບຸກຄົນ, ການຈັດຕັ້ງທີ່ມີບັນຫາກ່ຽວພັນເຖິງໂຄງການຂະຫຍາຍພັດທະນາຢາງພາລາຂອງ VRG ຢູ່ປະເທດກຳປູເຈຍ ແລະ ສປປ ລາວ.

2-ກ່ຽວກັບບັນຫາທີ່ມີການກ່ຽວພັນເຖິງໂຄງການຂະຫຍາຍພັດທະນາຢາງພາລາຂອງVRG ພຽງແຕ່ຂໍ້ຈຳກັດຢູ່ໃນຂອບເຂດໂຄງການພັດທະນາຢາງພາລາຂອງ VRG ແລະ ຂະໜາດຮູບຮ່າງ, ໜ້າທີ່ຮັບຜິດຊອບ ແລະ ສິດຜົນປະໂຫຍດຂອງນັກລົງທືນໄດ້ກຳນົດໃນບົດສັນຍາຮ່ວມມືເຂດສຳປະທານທີ່ດິນເສຖະກິດທີ່ໄດ້ເຊັນກັບລັຖະບານໃນປະເທດບອ່ນປະຈຳການເພື່ອປະຕິບັດໃນບັນດາໂຄງການພັດທະນາຢາງພາລາ ແລະ ຕາມຂໍ້ກຳນົດກົດໝາຍຂອງປະເທດບອ່ນທີ່ປະຈຳ, ລວມມີ:

**-ກ່ຽວກັບກຳປູເຈຍ:** ກົດໝາຍທີ່ດິນ, ເອກະສານລັຖະການໃນການຄຸ້ມຄອງທີ່ດິນຂອງລັດ, ຂໍ້ກຳນົດລາຍລະອຽດກ່ຽວກັບການໂອນມອບສຳປະທານທີ່ດິນເສຖະກິດ, ກົດໝາຍປົກປ້ອງພືນປ່າ ແລະ ກົດໝາຍຂໍ້ກຳນົດໃນບັນດາຂອບເຂດທີ່ຄວນຈະໄດ້ປົກປອ້ງ.

**-ກ່ຽວກັບ ສປປ ລາວ:** ກົດໝາຍທີ່ດິນ, ກົດໝາຍປົກປ້ອງປ່າ, ກົດໝາຍຊຸກຍູ້ການລົງທືນ, ເອກະສານລັຖະການຂໍ້ກຳນົດລາຍລະອຽດທີ່ເວົ້າເຖິງການເຊົ່າ ແລະ ສຳປະທານທີ່ດິນຂອງລັດ, ເອກະສານແນະນຳໃນການປະຕິບັດທາງດ້ານກົດໝາຍທີ່ດິນ, ການຊົດເຊີຍ ແລະ ຈັດຫາບອ່ນທີ່ຢູ່ຢ່າງຖາວອນຂອງໂຄງການພັດທະນາ.

3- ກົດຫລັກສະບັບນີ້ນຳໃຊ້ໃຫ້ກັບບັນດາສຳນັກງານທີ່ຂື້ນກັບ VRG ທີ່ກຳລັງປະຕິບັດໃນການລົງທືນຢູ່ກຳປູເຈຍ ແລະ ສປປ ລາວ. ລວມມີບັນດາສຳນັກງານຕາມບັນຊີລາຍຊື່ຕິດຄັດໃນສວ່ນສາລະບານ 1.

**ມາດຕາ2: ພາສານຳໃຊ້ເພື່ອສອ່ງແສງ, ຄຳສະເໜີ ແລະ ຕິດຕໍ່ພົວພັນ.**

ບັນດາການສອ່ງແສງ, ຄຳສະເໜີເຖິງ VRG ອາດຈະນຳໃຊ້ພາສາປະເທດບອ່ນທີ່ປະຈຳຢູ່ ຫຼື ດວ້ຍພາສາ ຫວຽດ-ນາມ ຫຼື ພາສາອັງກິດ, ໃນນັ້ນ, ຕອ້ງອະທິບາຍແຈ້ງເນື້ອໃນບົດສ່ອງແສງ, ຄຳສະເໜີ, ນອກຈາກນັ້ນຕອ້ງມີລາຍຊື່, ບອ່ນຢູ່, ເບີໂທລະສັບ(ຫຼືທີ່ຢູ່ບອ່ນມີຄວາມເຊື່ອຖືໃນເວລາຕອ້ງການພົວພັນ)ຂອງບຸກຄົນ, ຂອງການຈັດຕັ້ງທີ່ມີການສອ່ງແສງ, ຜູ້ສະເໜີ ເພື່ອສະດວກແກ່ການໃຫ້ຄຳຕອບ.

**ມາດຕາ3: ຮູບແບບໃນການສ່ອງແສງ, ຄຳສະເໜີ ແລະ ສະຖານທີ່ຮັບຮອງ.**

1- ຮູບການສ່ອງແສງ, ຄຳສະເໜີຕ້ອງຂຽນເປັນເອກະສານ. ບຸກຄົນ, ການຈັດຕັ້ງອາດຈະສົ່ງໂດຍກົງເອກະສານບົດສ່ອງແສງ, ຄຳສະເໜີເຖິງສຳນັກງານຜູ້ຕ່າງໜ້າຂອງ VRG ຕາມບ່ອນຢູ່ທີ່ຈະໄດ້ຍົກຂື້ນໃນຂໍ້ທີ 3 ມາດຕານີ້.

2- ການຕິດຕໍ່ສົ່ງຂ່າວ (ຂ່າວສານ) ຂອງບັນດາເອກະຊົນ, ການຈັດຕັ້ງທີ່ໄດ້ສົ່ງປະກອບ. ຕ້ອງໄດ້ຈົດກ່າຍເຂົ້າໃນບັນຊີຮັບຮອງໃນແບບຟອມສາລະບານທີ1 ທີ່ຕິດຄັດ. ສຳນັກງານຕ່າງໜ້າຂອງ VRG ຈະບໍ່ມີຄວາມຮັບຜິດຊອບໃນການຕິດຕໍ່ສົ່ງຂ່າວ(ຂ່າວສານ)ທີ່ຜິດພາດ, ເພາະຈະພາໃຫ້ການຕອບຄືນບໍ່ໄດ້ຮັບຜົນໃນການພິຈາລະນາຕັດສິນ.

3- ສະຖານທີ່ບອ່ນຢູ່ຂອງຜູ້ຮັບເອົາການສ່ອງແສງ ແລະ ຄຳສະເໜີ.

a) ຢູ່ກຳປູເຈຍ: 92 ຖະໜົນນະນຸດົມ, ນົມເປັນ, ນະຄອນຫຼວງພະນົມເປັນ.

b) ຢູ່ ສປປ ລາວ: ເສັ້ນທາງ T4, ບ້ານຮອ່ງແກ, ເມືອງໄຊເສຖາ, ນະຄອນຫຼວງວຽງຈັນ.

c) ຫອ້ງການສຳນັກງານບັນດາສາມະຊິກຂອງVRG ຢູ່ປະເທດບອ່ນທີ່ປະຈຳການ.

4- ຫອ້ງການຜູ້ຕ່າງໜ້າຂອງ VRG ຫຼື ບັນດາສຳນັກງານສາມະຊິກຢູ່ປະເທດທີ່ປະຈຳການຈະໄດ້ແຈກບັນຊີຮັບດວ້ຍເອກະສານມີຕົວເລກສົມທຽບໃຫ້ກັບສວ່ນບຸກຄົນ ຫຼື ການຈັດຕັ້ງທີ່ສົ່ງຄຳສອ່ງແສງ ແລະ ຄຳສະເໜີ, ເອກະສານບັນຊີຮັບສະບັບນີ້ອາດຈະແຈກເຖິງໂດຍກົງ ຫຼື ບໍ່ກໍ່ຈະສົ່ງຜ່ານທາງໄປສະນີແລ້ວແຕ່ວິທີການໃນການສອ່ງແສງ ແລະ ຄຳສະເໜີທີ່ໄດ້ສົ່ງ. ແບບຕາຕະລາງຂອງບັນຊີຕາມສາລະບານ2. ທີ່ຕິດຄັດ.

## II. ການຮັບຮອງ, ການພິຈາລະນາຕັດສິນໃນການສອ່ງແສງ, ຄຳສະເໜີ ແລະ ເປີດເຜີຍຜົນສຳເລັດໃນການພິຈາລະນາຕັດສິນການສອ່ງແສງ ແລະ ຄຳສະເໜີ.

**ມາດຕາ4: ຮັບຮອງເອົາການສອ່ງແສງ ແລະ ຄຳສະເໜີ.**

1- ຫອ້ງການຜູ້ຕ່າງໜ້າVRGຢູ່ປະເທດທີ່ປະຈຳການ, ຂອບເຂດສິດອຳນາດຈະໄດ້ລົງມະຕິ ຫຼື ຮຽນຕໍ່ VRG ຕົກລົງມອບໝາຍສຳນັກງານຮັບຜິດຊອບ. ສຳນັກງານປະສົມປະສານເພື່ອພິຈາລະນາຕັດສິນ, ພອ້ມກັນນັ້ນສົ່ງໃຫ້ຜູ້ປະຈຳການຄະນະຊີ້ນຳພັດທະນາຢາງພາລາຂອງ VRG ທີ່ປະຈຳຢູ່ ສປປ ລາວ ແລະ ກຳປູເຈຍ.( ຜູ້ປະຈຳການ ຄະນະຊີ້ນຳຂະຫຍາຍພັດທະນາຢາງພາລາ ) ເພື່ອຕິດຕາມ ແລະ ຊຸກຍູ້ປະຕິບັດ.

2- ຫອ້ງການຜູ້ຕ່າງໜ້າ VRG ຢູ່ປະເທດທີ່ປະຈຳການມີໜ້າທີ່ຮັບຜິດຊອບຈັດຕັ້ງ, ບັນຈຸພະນັກງານຕອ້ນຮັບ ແລະ ແນະນຳສວ່ນບຸກຄົນ, ການຈັດຕັ້ງທີ່ໄດ້ສົ່ງມອບຄຳສອ່ງແສງ ແລະ ຄຳສະເໜີ, ເປີດບັນຊີຕິດຕາມໃນການຮັບຄຳສອ່ງແສງ, ຄຳສະເໜີ ແລະ ມອບສົ່ງເຖິງບັນດາສຳນັກງານສາມະຊິກຂອງ VRG ທີ່ມີການພົວພັນ, ເພື່ອຈະໄດ້ພິຈາລະນາ, ຊຸກຍູ້, ກວດກາ, ລວບລວມ ແລະ ລາຍງານສະພາບ, ຜົນໄດ້ຮັບໃນການພິຈາລະນາຕັດສິນ, ການສອ່ງແສງ ແລະ ຄຳສະເໜີຕາມຂໍ້ທີ່ໄດ້ກຳນົດ.

3- VRG ຈະບໍ່ໄດ້ໃຫ້ຄຳຕອບ ແລະ ສະໜອງຂ່າວສານໃນບັນດາກໍລະນີດັ່ງຕໍ່ໄປນີ້: (i) ບັນດາຂ່າວສານຂອງປະເທດບອ່ນທີ່ໄດ້ພັກພາອາໄສໄດ້ກຳນົດ, ນັກລົງທືນບໍ່ໄດ້ເປີດເຜີຍຖ້າຫາກວ່າບໍ່ໄດ້ຮັບການຮັບຮອງຈາກອົງການທີ່ມີສິດອຳນາດຂອງປະເທດບອ່ນທີ່ໄດ້ພັກພາອາໄສ. (ii) ໃນບັນຫາທີ່ນອນຢູ່ນອກຂໍ້ກຳນົດກ່ຽວກັບບັນດາສິດ, ພັນທະ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງນັກລົງທືນຕ່າງປະເທດຕອ້ງໄດ້ເຄົາລົບ ແລະ ປະຕິບັດຕາມ. (iii) ບັນດາຈົດໝາຍສົນເທບໍ່ອອກຊື່, ບໍ່ມີຂ່າວຄາວຂອງຜູ້ສົ່ງ, ບອ່ນສົ່ງ. (iv) ໃນບັນດາຄວາມຮຽກຮອ້ງຕອບສະໜອງທາງດ້ານຂ່າວສານທີ່ບໍ່ພົວພັນເຖິງໂຄງການ ຫຼື ມີການສະເໜີໃນລັກສະນະທີ່ຊົ່ວຮ້າຍ.

**ມາດຕາ5: ການພິຈາລະນາຕັດສິນຄຳສ່ອງແສງ, ຄຳສະເໜີຢູ່ໃນບັນດາສຳນັກງານ.**

1- ບັນດາສຳນັກງານຕ້ອງມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການພິຈາລະນາ ເພື່ອລາຍງານຜົນໄດ້ຮັບການພິຈາລະນາຂື້ນຫາຫ້ອງການຜູ້ຕ່າງໜ້າ VRG ທີ່ສັງກັດຢູ່ປະເທດປະຈຳການ, ເພື່ອຈະໄດ້ໃຫ້ຄຳຕອບເຖິງສ່ວນບຸກຄົນ, ການຈັດຕັ້ງທີ່ມີການສ່ອງແສງ ແລະ ສະເໜີມາ.

2- ກໍລະນີການສ່ອງແສງ, ການສະເໜີທີ່ມີເນື້ອໃນສັບສົນພົວພັນເຖິງຫຼາຍກົມກອງອື່ນທີ່ຂື້ນກັບ VRG ຄວນຈະໃຊ້ເວລາສົມທົບກວດກາ, ເປັນເອກະພາບທາງດ້ານຄວາມຄິດຄວາມເຫັນ ແລະ ວິທີການພິຈາລະນາຕັດສິນ, ຈາກນັ້ນຫ້ອງການຜູ້ຕ່າງໜ້າມີໜ້າທີ່ຮັບຜິດຊອບແຈ້ງການເຖິງພາກສ່ວນບຸກຄົນ, ການຈັດຕັ້ງຮັບຮູ້ເຖິງຜົນສຳເລັດໃນການແກ້ໄຂ. ພ້ອມກັນນັ້ນ, ກໍ່ຕ້ອງແຈ້ງ ແລະ ໃຫ້ກຳນົດເວລາເພື່ອຈະໄດ້ຕອບບັນຫາໃນການສ່ອງແສງ ແລະ ຄຳສະເໜີ.

3- ຫ້ອງການຜູ້ຕ່າງໜ້າVRGທີ່ສັງກັດປະເທດປະຈຳການມີໜ້າທີ່ ແລະ ຄວາມຮັບຜິດຊອບ:

a) ຕິດຕາມກວດກາຊຸກຍູ້ໃນການພິຈາລະນາຄຳສ່ອງແສງ, ຄຳສະເໜີຂອງແຕ່ລະກົມກອງທີ່ຂື້ນກັບ VRG.

b) ປະຕິບັດລະບອບລາຍງານຕາມຂໍ້ກຳນົດຢູ່ໃນມາດຕາ7.

c) ແຈ້ງການຜົນໄດ້ຮັບໃນການພິຈາລະນາຕັດສິນເຖິງສ່ວນບຸກຄົນ, ການຈັດຕັ້ງທີ່ມີການສ່ອງແສງ ແລະ ສະເໜີຂື້ນຫາ.

d) ລາຍງານໃຫ້ຜູ້ປະຈຳການ, ຄະນະຊີ້ນຳຂະຫຍາຍພັດທະນາຢາງພາລາ. ປະຕິບັດວິທີການທີ່ຈຳເປັນແນໃສ່ເພື່ອດັດແກ້ປັບປຸງກົດລະບຽບໃນການພິຈາລະນາຕັດສິນການສ່ອງແສງ, ຄຳສະເໜີຂອງສ່ວນບຸກຄົນ ແລະ ບັນດາກົມກອງ.

**ມາດຕາ6: ໃຫ້ຄຳຕອບຜົນໄດ້ຮັບໃນການພິຈາລະນາຕັດສິນການສ່ອງແສງ ແລະ ຄຳສະເໜີ.**

1- ຫ້ອງການຜູ້ຕ່າງໜ້າ VRG ທີ່ສັງກັດໃນປະເທດປະຈຳການຈະໃຫ້ຄຳຕອບກັບສ່ວນບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ສົ່ງບົດສ່ອງແສງ, ຄຳສະເໜີ. ຢູ່ໃນໄລຍະ 30 ວັນ, ນັບແຕ່ມື້ໄດ້ຮັບ. ກໍລະນີໃນການສ່ອງແສງ, ຄຳສະເໜີ ທີ່ມີລັກສະນະສັບສົນຄືດັ່ງທີ່ໄດ້ຍົກຢູ່ໃນມາດຕາ5.2, ໃນໄລຍະເວລາທີ່ໄດ້ກຳນົດ 30 ວັນ. ຫ້ອງການຜູ້ຕ່າງໜ້າ VRG ທີ່ສັງກັດໃນປະເທດປະຈຳການຈະສະເຫຼີຍຕອບຊົ່ວຄາວເຖິງສ່ວນບຸກຄົນ ຫຼື ອົງການຈັດຕັ້ງເພື່ອຈະໄດ້ຂໍ້ມູນຂ່າວສານເຖິງວຽກງານພິຈາລະນາ ແລະ ແຈ້ງການໄລຍະເວລາຄາດຄະເນທີ່ຈະໄດ້ຕອບຢ່າງເປັນທາງການ.

2- ກໍລະນີການສ່ອງແສງ, ຄຳສະເໜີທີ່ມີເນື້ອໃນຄືລັກສະນະທີ່ໄດ້ຍົກຂື້ນໃນມາດຕາ4.3, ທາງຫ້ອງການຜູ້ຕ່າງໜ້າ VRG ຈະບໍ່ໄດ້ສະເຫຼີຍຕອບ, ມີພຽງແຕ່ຈະແຈ້ງການອະທິບາຍ. ເພາະຄຳຮຽກຮ້ອງຂອງຂະເຈົ້າຍັງບໍ່ທັນໄດ້ຕອບສະໜອງໄດ້ຢູ່ໃນໄລຍະ 30 ວັນ, ແລະ ຈະອີງຕາມແຕ່ລະກໍລະນີ. ບາງທີຄວາມສາມາດຂອງຫ້ອງການຜູ້ໜ້າ VRG ຈະຊີ້ແນະໃຫ້ສ່ວນບຸກຄົນ ຫຼື ການຈັດຕັ້ງພົວພັນໂດຍກົງກັບອົງການທີ່ມີສິດອຳນາດໃນປະເທດທີ່ກຳລັງປະຈຳການເພື່ອປະຕິບັດໃນການສ່ອງແສງ ແລະ ສະເໜີ.

3- ທັງໝົດບັນດາການໃຫ້ຄຳຕອບຂອງຫ້ອງການຜູ້ຕ່າງໜ້າ VRG ເຖິງບັນດາສ່ວນບຸກຄົນ ຫຼື ອົງການຈັດຕັ້ງທີ່ໄດ້ສ່ອງແສງ ແລະ ສະເໜີຕ້ອງມີຕົວເລກສົມທຽບທີ່ໄດ້ລະບຸໃນບົດບັນທຶກຮັບຮອງການສ່ອງແສງ ແລະ ສະເໜີ.

4- ໃນກໍລະນີການສ່ອງແສງ, ຄຳສະເໜີທີ່ມີລັກສະນະຕາງໜ້າ(ຫຼາຍສ່ວນບຸກຄົນ, ຫຼາຍການຈັດຕັ້ງທີ່ໄດ້ສ່ອງແສງ)ຜົນໃນການພິຈາລະນາແມ່ນຈະໄດ້ເພີ້ມເຕີມເຂົ້າໃນບົດແຈ້ງການບົນຮູບການໂຄສະນາຂ່າວສານມວນຊົນ, ຫຼື ປະກາດຕິດໄວ້ໃນຫ້ອງການ.

## III. ການຈັດຕັ້ງປະຕິບັດ.

**ມາດຕາ7: ລະບອບຂ່າວສານລາຍງານ.**

ສະໄໝກ່ອນວັນທີ 20 ຂອງເດືອນທ້າຍງວດ, ບັນດາກົ່ມກອງມີໜ້າທີ່ ແລະ ຄວາມຜິດຊອບສົ່ງລາຍງານໃຫ້ກັບຫ້ອງການຜູ້ຕ່າງໜ້າ VRG ທີ່ສັງກັດໃນປະເທດບອ່ນປະຈໍາການ ໃນຜົນສໍາເລັດກ່ຽວກັບສະພາບການຮັບຮອງ ແລະ ພິຈາລະນາການສອ່ງແສງ, ຄໍາສະເໜີເພື່ອໃຫ້ຫ້ອງການລວບລວມລາຍງານໃຫ້ຜູ້ປະຈໍາການ ແລະ ຄະນະຊີ້ນໍາຂະຫຍາຍພັດທະນາຢາງພາລາ.

**ມາດຕາ8: ຈັດຕັ້ງປະຍັດ.**

1- ຫ້ອງການຜູ້ຕ່າງໜ້າVRGທີ່ສັງກັດໃນປະເທດບອ່ນປະຈໍາການ, ບັນດາສໍານັກງານທີ່ຂື້ນກັບ VRG ທີ່ກໍາລັງປະຕິບັດໃນການລົງທືນຢູ່ປະເທດກໍາປູເຈຍ ແລະ ສປປ ລາວ, ຕອ້ງມີໜ້າທີ່ ແລະ ຄວາມຮັບຜິດຊອບຈັດຕັ້ງປະຕິບັດລະບົບກົດຫຼັກສະບັບນີ້.

2- ຢູ່ໃນກໍານົດ 30 ວັນ, ນັບແຕ່ມື້ກົາກລົງມີຜົນສັກສິດ, ຫອ້ງການຜູ້ຕ່າງໜ້າ VRG ແລະ ບັນດາສໍານັກງານສາມະຊິກຂອງVRGທີ່ສັງກັດໃນປະເທດບອ່ນປະຈໍາການຕອ້ງໄດ້ປະກາດເປັນທາງການ, ເປີດເຜີຍແຈ້ງຂ່າວລາຍລະອຽດຂອງກົດຫຼັກສະບັບນີ້ດວ້ຍວິທີການປະກາດຕິດໄວ້ທີ່ຫອ້ງການ ແລະ ແຈ້ງການເຖິງອໍານາດການປົກຄອງທອ້ງຖິ່ນເພື່ອຮັບຊາບ.

3-ກົດຫຼັກສະບັບນີ້ໄດ້ແປອອກເປັນພາສາຂອງປະເທດທີ່ກໍາລັງສັງກັດຢູ່ ແລະ ດວ້ຍພາສາອັງກິດ.

4- ໃນຂະບວນການປະຕິບັດ, ຖ້າແມ່ນມີບັນຫາຫຍຸ້ງຍາກຕິດຂັດ. ຮຽກຮອ້ງໃຫ້ບັນດາສໍານັກງານສອ່ງແສງຂື້ນຫາຫ້ອງການຜູ້ຕ່າງໜ້າ VRG ທີ່ສັງກັດໃນປະເທດບອ່ນປະຈໍາການລວບລວມລາຍງານ VRG ເພື່ອຈະໄດ້ພິຈາລະນາດັດແປງ ແລະ ເພີ່ມເຕີມໃຫ້ເໝາະສົມ.

ຕໜ. ສະພາສະມາຊິກ

ປະທານ,ທີ່ໄດ້ເຊັນ

*ຫວໍສີລືກ*

## ສາລະບານ1.

## ບັນຊີລາຍຊື່ບັນດາໂຄງການຢາງພາລາຂອງ VRG ຢູ່ກໍາປູເຈຍ.

| ລ/ດ | ຊື່ໂຄງການ | ບ່ອນປະຈໍາການ | ເນື້ອທີ່ດິນສໍາປະທານ(ຮ/ຕ) |
|---|---|---|---|
| 1 | ຝູຮຽງ-ກາຣາເຕຍ | ເມືອງ Snoul, ແຂວງ Kratie | 8.349 |
| 2 | ດົ່ງນາຍ-ກາຣາເຕຍ | ເມືອງ Sam bo, ແຂວງ Kratie | 7.097 |
| 3 | ດົ່ງຝູ-ກາຣາເຕຍ | ເມືອງ Sam bo, ແຂວງ Kratie | 9.345 |
| 4 | Vketi | ເມືອງ Snoul, ແຂວງ Kratie | 5.059 |
| 5 | ເຢົ່າຕ໋ຽງ-ກໍາປູເຈຍ | ເມືອງ Snoul, Chlong, ແຂວງ Kratie | 7.972 |
| 6 | ເຢົ່າຕ໋ຽນ-ກາຣາເຕຍ | ເມືອງ Snoul, Chlong, ແຂວງ Kratie | 6.592 |
| 7 | ເຕີນບຽນ-ກໍາປົງໂທມ | ເມືອງ Santuk, ແຂວງ Kampong Thom | 8.100 |
| 8 | ແມ່ຂອງ | ເມືອງ Prasat, Rovieng, ແຂວງ Preah Vihear, ແຂວງ Kampong Thong | 8.000 |
| 9 | ເຝືອກຣວ່າ-ກໍາປົງໂທມ | ເມືອງ Santuk, ແຂວງ Kampong Thom | 9.184 |
| 10 | ບ່າເຣັຍ-ກໍາປົງໂທມ | ເມືອງ Santuk, ແຂວງ Kampong Thom | 5.914 |
| 11 | CRCK II | ເມືອງ Stoung, ແຂວງ Kampong Thom; ເມືອງ Chikraeng, ແຂວງ Seam Reap | 9.235 |
| 12 | Beanheak | ເມືອງ Prasat Balangk, ແຂວງ Kampong Thom; ເມືອງ Chikraeng, ແຂວງ Seam Reap | 9.480 |
| 13 | CRCK | ເມືອງ Sandal, ແຂວງ Kampong Thom | 6.155 |
| 14 | ຣວ່າງແອ້ງມາງຢາງ k | ເມືອງ Veun Sai, ແຂວງ Rattanakiri | 7.195 |
| 15 | ກຣົງບຸກ-ຣັດຕະນະຄີຣີ | ເມືອງ Andong Meas, Tavien, ແຂວງ Ratanakiri | 6.765 |
| 16 | Eah’leo  BM | ເມືອງ Lumphat, ແຂວງ Ratanakiri | 8.400 |
| 17 | ຈືປຣົງ k | ເມືອງ Phala, ແຂວງ Steung Treng | 7.400 |
| 18 | ບິ່ງເຝືອກ 1 | ເມືອງ Keosema, ແຂວງ Mondulkiri | 5.100 |
| 19 | ໄຕນິງ-ຊຽມຣຽບ | ເມືອງ Trapeang Prasat, ແຂວງ Oddo Meanchey | 7.600 |

## ບັນຊີລາຍຊື່ບັນດາໂຄງການຂະຫຍາຍພັດທະນາຢາງພາລາຢູ່ ສປປ ລາວ.

| ລ/ດ | ຊື່ໂຄງການ | ບ່ອນປະຈໍາການ | ເນື້ອທີ່ດິນສໍາປະທານ(ຮ/ຕ) |
|---|---|---|---|
| 1 | ບໍລິສັດຫວຽດ-ລາວ | ເມືອງບາຈຽງ, ແຂວງຈໍາປາສັກ | 10.064 |
| 2 | ບໍລິສັດກວາສະໂກ | ເມືອງພິນ ແລະ ເຊໂປນ, ແຂວງສະຫວັນນາເຂດ | 8.371 |

ສາລະບານ 2.

ຊື່ສຳນັກງານ

ເລກທີ:...../201..../ຣຣ-

ຄຳຂວັນຂອງປະເທດບ່ອນທີ່ປະຈຳ

*ສະຖານທີ່,ວັນທີ:...../...../201....*

# ບັນຊີຮອງຮັບໃນການສອ່ງແສງ, ຄຳສະເໜີ.

1. ຂ່າວສານກ່ຽວກັບສຳນັກງານ.

| | |
|---|---|
| ຊື່ສຳນັກງານ | |
| ສະຖານທີ່ບອ່ນຢູ່ | |
| ເບີໂທລະສັບ | |

2. ຂ່າວສານກ່ຽວກັບສ່ວນບຸກຄົນ, ການຈັດຕັ້ງທີ່ໄດ້ສອ່ງແສງ, ການສະເໜີ.

| | |
|---|---|
| ຊື່ບຸກຄົນ, ການຈັດຕັ້ງ | |
| ສະຖານທີ່ບອ່ນຢູ່ | |
| ເບີໂທລະສັບ | |

3. ເນື້ອໃນການສອ່ງແສງ, ຄຳສະເໜີ:(ຜູ້ຮັບຕອ້ງຈົດແຕ້ມໂດຍຫຍໍ້)

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

4. ເອກະສານສັນລະສູດສິ່ງຄັດຕິດມາພອ້ມ( ຖ້າມີ ):( ຜູ້ຮັບຕອ້ງຈົດເຂັ້ນຊີບັນທືກ )

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

..........................................................................................................

ສາລະບານ3.

# ເປີດບັນຊີຕິດຕາມໃນການຮັບຮອງ ແລະ ພິຈາລະນາຕັດສິນການສອ່ງແສງ,ຄໍາສະເນີ້.

| ລ/ດ | ຕົວເລກສົມທຽບບັນຊີຮັບ | ວັນເດືອນປີ ຮັບການ ສອ່ງແສງ ສະເໜີ | ຊື່,ບອ່ນຢູ່,ເບີໂທລະສັບ, ບຸກຄົນ,ການຈັດຕັ້ງທີ່ໄດ້ສົ່ງສອ່ງແສງ, ຄໍາສະເໜີ | ຮູບການໃນການສົ່ງບົດສອ່ງແສງ, ສະເໜີ | ສະຫຼຸບຫຍໍ້ເນື້ອໃນການສອ່ງແສງ, ສະເໜີ | ຜົນໄດ້ຮັບໃນການພິຈາລະນາ | ວັນເດືອນປີສະໜອງຕອບເຖິງສວ່ນບຸກຄົນ, ການຈັດຕັ້ງທີ່ໄດ້ສົ່ງບົດສ່ອງແສງ, ຄໍາສະເໜີ |
|---|---|---|---|---|---|---|---|
| | | | | | | | |
| | | | | | | | |
| | | | | | | | |